# ມັນແມ່ນພະຍາດ COVID-19 ຫຼື ປະຕິກິລິຍາຂອງຢາວັກຊີນບໍ?

**ອາການຂອງພະຍາດ COVID-19**
**ນັ້ນບໍ່ເກີດຂຶ້ນຍ້ອນ ຢາວັກຊີນ:**

ໄອ

ຫາຍໃຈຍາກ

ມີນໍ້າມູກໄຫຼ

ເຈັບຄໍ

ການສູນເສຍລົດຊາດຫາກິ່ນ

ຖ້າທ່ານມີອາການຂ້າງເທິງ ແລະ ທ່ານຄິດວ່າ ທ່ານ ເປັນພະຍາດ COVID-19, ໃຫ້ ຂໍຄໍາປຶກສາທາງການແພດ. ທ່ານອາດຈະຕ້ອງ ໄດ້ ມີການກວດພະຍາດ COVID-19.

**ປະຕິກິລິຍາຢາວັກຊີນ**
**ທີ່ຄ້າຍຄືກັນກັບ ອາການຂອງພະຍາດ COVID-19:**

ເປັນໄຂ້

ເມື່ອຍລ້າ

ເຈັບກ້າມຊີ້ນ

ຖອກທ້ອງ

ປວດຮາກ

ເຈັບຫົວ

ປະຕິກິລິຍາຢາວັກຊີນຄວນ ຫາຍໄປ ພາຍໃນໜຶ່ງ ຫຼື ສອງມື້. ຖ້າ ທ່ານຮູ້ສຶກເຈັບຫຼາຍ, ພິຈາລະນາ ຂໍຄໍາປຶກສາທາງການແພດ.

**ປະຕິກິລິຍາ ຢາວັກຊີນ**
**ນັ້ນບໍ່ເກີດຂຶ້ນກັບ ພະຍາດ COVID-19:**

ເຈັບ,

ແດງ ຫຼື

ໃຄ່ບວມບ່ອນ

ແທງ ເຂັມສັກຢາ

ຖ້າໜຶ່ງໃນປະຕິກິລິຍາເຫຼົ່ານີ້ ເຮັດໃຫ້ທ່ານ ເຮັດກິດຈະກໍາປະຈໍາວັນບໍ່ໄດ້ (ເຊັ່ນ ການມັດສາຍເກີບ, ການພິມໜັງສື), ໃຫ້ ຂໍຄໍາປຶກສາທາງການແພດ.

ຢາວັກຊີນປ້ອງກັນພະຍາດ COVID-19ບໍ່ເຮັດໃຫ້ເປັນພະຍາດ COVID-19.

ຢາວັກຊີນປ້ອງກັນພະຍາດ COVID-19ບໍ່ເຮັດໃຫ້ກວດ PCR ພົບເຊື້ອພະຍາດ COVID-19.

ຖ້າທ່ານກວດພົບເຊື້ອພະຍາດ COVID-19, ປະຕິບັດຕາມຄໍາແນະນໍາການກັກບໍລິເວນທີ່: **COVIDvaccineWA.org**

ພະຍາດ COVID-19 ໄດ້ແຜ່ຂະຫຍາຍຢ່າງກວ້າງໃນລັດ Washington. ເນື່ອງຈາກວ່າຢາວັກຊີນບໍ່ມີປະສິດຕິຜົນເຕັມທີ່ຈົນກ່ວາຮອດ 2 ອາທິດຫຼັງຈາກການສັກຢາຄັ້ງສຸດທ້າຍຂອງທ່ານ, ມັນອາດຈະເປັນໄປໄດ້ທີ່ທ່ານຍັງສາມາດຕິດເຊື້ອພະຍາດ COVID-19 ຖ້າວ່າທ່ານໄດ້ສໍາຜັດ ກ່ອນເວລານັ້ນ, ເຖິງແມ່ນວ່າທ່ານໄດ້ສັກຢາຄັ້ງໜຶ່ງ ຫຼື ຄັ້ງສອງແລ້ວກໍ່ຕາມ. ຖ້າທ່ານຮູ້ສຶກບໍ່ສະບາຍຫຼັງຈາກການສັກຢາວັກຊີນ, ຕາຕະລາງນີ້ຊ່ວຍ ໃຫ້ທ່ານຮູ້ວ່າທ່ານກໍາລັງມີປະຕິກິລິຍາຕໍ່ກັບຢາວັກຊີນ ຫຼື ຖ້າທ່ານອາດຈະຕິດເຊື້ອພະຍາດ COVID-19.

**ຄໍາແນະນໍາທົ່ວໄປສໍາລັບຄົນທີ່ກໍາລັງໄດ້ຮັບວັກຊີນ:** ຖ້າທ່ານມີໄຂ້ (ອຸນຫະພູມສູງກ່ວາ 100,5 ອົງສາຟາເຣນຮາຍ) ພາຍໃນ 72 ຊົ່ວໂມງນັບແຕ່ ໄດ້ຮັບການສັກຢາວັກຊີນ, ໃຫ້ຢູ່ເຮືອນ. ຖ້າໄຂ້ຂອງທ່ານຫາຍໄປພາຍໃນ 48 ຊົ່ວໂມງ ແລະ ທ່ານບໍ່ມີອາການ/ອາການອື່ນໆຂອງພະຍາດ COVID-19, ທ່ານອາດຈະກັບໄປເຮັດວຽກໄດ້. ຖ້າທ່ານຍັງເປັນໄຂ້ຫຼັງຈາກ 48 ຊົ່ວໂມງ ຫຼື ທ່ານມີອາການອື່ນໆທີ່ອາດຈະເປັນອາການຂອງ ພະຍາດ COVID-19, ທ່ານຄວນສືບຕໍ່ຢູ່ເຮືອນ ແລະ ໄປກວດສໍາລັບພະຍາດ COVID-19.

Washington State Department of Health

**DOH 820-124 April 2021 Lao**

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ຄົນຫູໜວກ ຫຼື ຍາກໃນການ ໄດ້ຍິນ ລູກຄ້າ, ກະລຸນາໂທຫາ 711 (Washington Relay) ຫຼື ອີເມວ civil.rights@doh.wa.gov.